**DEPARTMENT OF DEVELOPMENTAL SERVICES**
1600 NINTH STREET, Room 320, MS 3-8
SACRAMENTO, CA 95814
TTY (916) 654-2054 (ສຳລັບຜູ້ມີບັນຫາດ້ານການຟັງ)
(916) 654-1954

ວັນທີ 2 ມີນາ 2020

ເຖິງ: ຫົວໜ້າຜູ້ບໍລິຫານສູນພາກພື້ນ

ຫົວຂໍ້: ການໃຫ້ທຶນເພື່ອສະໜັບສະໜູນ ການຈັດຕັ້ງປະຕິບັດ ໂປຼແກຣມການຕັດສິນໃຈດ້ວຍຕົນເອງ

ອີງຕາມໝວດ 4685.8(g) ຂອງປະມວນກົດໝາຍສະຫວັດດີການແລະສະຖາບັນ (Welfare and Institutions, W&I), ເງິນທຶນຖືກແບ່ງສັນປັນສ່ວນໃຫ້ ສູນພາກພື້ນເພື່ອສະໜັບສະໜູນ ການຈັດຕັ້ງປະຕິບັດ ໂປຼແກຣມການຕັດສິນໃຈດ້ວຍຕົນເອງ (Self-Determination Program, SDP). ຈຸດປະສົງຂອງໜັງສືສະບັບນີ້ແມ່ນໃຫ້ຄຳແນະນຳໃນການນຳໃຊ້ເງິນທຶນ, ລວມເຖິງ ການຈຳເປັນຕ້ອງເຮັດວຽກຮ່ວມກັນກັບ ຄະນະກຳມະການໃຫ້ຄຳແນະນຳອາສາສະໝັກທ້ອງຖິ່ນ (LVAC) ໃນການກຳນົດບຸລິມະສິດທ້ອງຖິ່ນສຳລັບ ການໃຫ້ທຶນ.

ໝວດ 4685.8(g) ຂອງ ປະມວນກົດໝາຍ W&I ລະບຸວ່າ ທຶນເຫລົ່ານີ້ຈະຖືກໃຊ້ ເພື່ອເພີ່ມຄວາມສາມາດຂອງ ຜູ້ເຂົ້າຮ່ວມ SDP ໃຫ້ສູງສຸດເພື່ອຊີ້ນຳ ຊີວິດຂອງເຂົາເຈົ້າເອງ. ພະແນກບໍລິການດ້ານການຈະເລີນເຕີບໂຕ (DDS), ການປຶກສາຫາລືກັບ ຜູ້ມີສ່ວນໄດ້ເສຍ, ຂອບເຂດບຸລິມະສິດທີ່ໄດ້ລະບຸແລ້ວ ສຳລັບການໃຫ້ທຶນແມ່ນລວມມີ:

- ການຮັບເຂົ້າ ແລະ ການເຝິກອົບຮົມ ຜູ້ຊ່ວຍແນະນຳອິດສະຫລະ;
- ການເຝິກອົບຮົມຮ່ວມກັນສຳລັບ ຜູ້ເຂົ້າຮ່ວມ, ຄອບຄົວ, ສູນພາກພື້ນ, ສະມາຊິກ LVAC ແລະ ອື່ນໆ;
- ສະໜັບສະໜູນ ຫລື ເຝິກສອນໃນການເຮັດການປ່ຽນຜ່ານໄປຍັງ SDP;
- ການຊ່ວຍເຫຼືອໃນການພັດທະນາແຜນການໃຊ້ຈ່າຍ;
- ການສະໜັບສະໜູນການແນະນຳເບື້ອງຕົ້ນເຊິ່ງສາມາດລວມທັງ ການໃຊ້ຈ່າຍສຳລັບ ຜູ້ເວົ້າ/ຜູ້ນຳສະເໜີ ແລະ ການພັດທະນາກ່ຽວກັບ ການດັດແກ້ວັດສະດຸ ແລະ
- ກຸ່ມ/ການສຳມະນາເຊີງປະຕິບັດການທີ່ຮ່ວມມືກັນເພື່ອກະຕຸ້ນຊຸກຍູ້ ການຮຽນຮູ້ທີ່ດຳເນີນຢູ່, ທີ່ແບ່ງປັນກັນ ແລະ ສົ່ງເສີມໂອກາດການແກ້ໄຂບັນຫາ.

LVACs ມີບົດບາດສຳຄັນໃນການຈັດຕັ້ງປະຕິບັດແລະ ການກວດກາ SDP. ສະນັ້ນ ສູນພາກພື້ນແລະ LVACs ຕ້ອງເຮັດວຽກຮ່ວມກັນເພື່ອໃຫ້ບຸລິມະສິດ ແກ່ການໃຊ້ ທຶນທີ່ມີເພື່ອສອດຄ່ອງກັບຄວາມຕ້ອງການຂອງ ຜູ້ເຂົ້າຮ່ວມໃນພື້ນທີ່ທ້ອງຖິ່ນຂອງພວກເຂົາ. ທຶນອາດພຽງຖືກໃຊ້ຈ່າຍພາຍຫລັງມີຂໍ້ຕົກລົງກັນຕໍ່ກັບ ຄວາມຕ້ອງການຂອງທ້ອງຖິ່ນ. ເບິ່ງ ການຄັດຕິດ 1 ສຳລັບການໃຊ້ທຶນທີ່ອາດຈະເກີດຂຶ້ນ, ຈຳນວນເງິນທີ່ມີໃນແຕ່ລະ ພື້ນທີ່ ສູນພາກພື້ນ ແລະ ຂັ້ນຕອນທີ່ແນະນຳໃນການກຳນົດການໃຊ້ທຶນ.

ຖ້າທ່ານມີຄຳຖາມໃດໆກ່ຽວກັບໜັງສືສະບັບນີ້, ກະລຸນາຕິດຕໍ່ sdp@dds.ca.gov.

ດ້ວຍຄວາມນັບຖື,

*ຕົ້ນສະບັບໄດ້ເຊັນໂດຍ:*

JIM KNIGHT
ຮອງຫົວໜ້າ
ພະແນກໂປຼແກຼມແຫ່ງລັດຖະບານກາງ (Federal Programs Division)

cc: ຜູ້ຄຸ້ມຄອງສູນພາກພື້ນ ຫົວໜ້າຜູ້ໃຫ້ຄຳປຶກສາ ສູນພາກພື້ນ
ການບໍລິການຊຸມຊົນ ສູນພາກພື້ນ ຫົວໜ້າ ກຸ່ມສຳນັກງານ ສູນພາກພື້ນ
ສະພາແຫ່ງລັດຕໍ່ກັບຄວາມບົກຜ່ອງດ້ານການຈະເລີນເຕີບໂຕ ທ່ານ Brian Winfield, DDS
LeeAnn Christian, DDS Karyn Meyreles, DDS
Mike Sakamoto, DDS Ernie Cruz, DDS

## ການຄັດຕິດ 1

**ການໃຫ້ທຶນເພື່ອສະໜັບສະໜູນ ການຈັດຕັ້ງປະຕິບັດ ໂປຼແກຣມການຕັດສິນໃຈດ້ວຍຕົນເອງ (SDP)**

ຕາມການແຈ້ງການໃນໜັງສືທີ່ມາພ້ອມກັບ ການຄັດຕິດນີ້, ອີງຕາມ ປະມວນກົດໝາຍ ສະຫວັດດີການແລະສະຖາບັນ ໝວດ 4685.8(g), ການໃຫ້ທຶນແມ່ນມີໃຫ້ສະໜັບສະໜູນ ການຈັດຕັ້ງປະຕິບັດ SDP. ການໃຊ້ທຶນເຫຼົ່ານີ້ທີ່ອາດຈະເກີດຂຶ້ນ ແລະຂັ້ນຕອນການເຮັດການຕັດສິນໃຈນີ້ ແລະ ການນໍາໃຊ້ ທຶນເຫຼົ່ານີ້ແມ່ນຖືກກໍານົດລຸ່ມນີ້.

| ບາດກ້າວ | ລາຍລະອຽດ |
|---|---|
| **ຂອບດເຂດບຸລິມະສິດສໍາລັບການ<br><br>ໃຊ້ການໃຫ້ທຶນ** | ຂອບເຂດບຸລິມະສິດສໍາລັບການໃຫ້ທຶນລວມມີ:<br>• ***ຄວາມຕ້ອງການຂອງ ການແນະນໍາເບື້ອງຕົ້ນ*** – ຄ່າໃຊ້ຈ່າຍໃນການສະໜອງ ການແນະນ□າເບື້ອງຕົ້ນ ລວມເຖິງ, ແຕ່ບໍ່ຈໍາກັດໃນການດັດແກ້/ການພິມວັດສະດຸ, ຄ່າໃຊ້ຈ່າຍຂອງຜູ້ເວົ້າ/ ຜູ້ນໍາສະເໜີ, ຄ່າໃຊ້ຈ່າຍພື້ນທີ່ປະຊຸມ, ການແປພາສາ/ລ່າມ ແລະ ອື່ນໆ.<br>• ***ການຮັບເຂົ້າ ແລະ ການເຝິກອົບຮົມ ຜູ້ຊ່ວຍແນະນໍາອິດສະຫລະ*** – ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບ ການເພີ່ມຈໍານວນ ຜູ້ຊ່ວຍແນະນໍາອິດສະຫລະທີ່ມີ. ນີ້ລວມເຖິງ, ແຕ່ບໍ່ຈໍາກັດໃນການຮັບເຂົ້າໃໝ່, ການພັດທະນາ ແລະ /ຫລື ການຈັດຫາການເຝິກອົບຮົມ, ການແປພາສາ/ລ່າມ, ຄ່າໃຊ້ຈ່າຍກ່ຽວກັບ ການຈັດຫາການເຝິກອົບຮົມ ແລະອື່ນໆ.<br>• **ກຸ່ມ/ການສໍາມະນາເຊີງປະຕິບັດການທີ່ຮ່ວມມືກັນ** – ການປະຊຸມຕໍ່ເນື່ອງແລະ/ຫລື ການປະຊຸມເປັນໄລຍະໆ ສໍາລັບ ຜູ້ເຂົ້າຮ່ວມ ແລະ ຄອບຄົວ, ຜູ້ໃຫ້ບໍລິການ ແລະອື່ນໆ., ເພື່ອໃຫ້ການຮຽນຮູ້ ແລະ ໂອກາດການແກ້ໄຂບັນຫາ. ຄ່າໃຊ້ຈ່າຍສາມາດລວມເຖິງ, ແຕ່ບໍ່ຈໍາເປັນສໍາລັບ ຄ່າໃຊ້ຈ່າຍການເດີນທາງຂອງຜູ້ເວົ້າ/ຜູ້ນໍາສະເໜີ, ນາຍແປພາສາ/ລ່າມ, ວັດສະດຸ, ການໃຊ້ຈ່າຍພື້ນທີ່ການປະຊຸມ, ອື່ນໆ. ນີ້ອາດກ່ຽວຂ້ອງກັບການປະສານງານກັບ LVACs/ຜູ້ເຂົ້າຮ່ວມໃນຂົງເຂດອື່ນເພື່ອເພີ່ມຂອບເຂດໂອກາດການຮຽນຮູ້/ການແບ່ງປັນຂໍ້ມູນ.<br>• ***ການເຝິກອົບຮົມຮ່ວມ*** – ການເຝິກອົບຮົມສໍາລັບ ຜູ້ເຂົ້າຮ່ວມ, ຄອບຄົວ, ພະນັກງານ ສູນພາກພື້ນແລະສະມາຊິກຂອງ ຄະນະກໍາມະການໃຫ້ຄໍາແນະນໍາອາສາສະໝັກທ້ອງຖິ່ນ, ຯລຯ. ການເຝິກອົບຮົມຮ່ວມຄວນຈະໂຟກັດໃສ່ ໂອກາດການຮຽນຮູ້ທີ່ແບ່ງປັນກັນ ເຊິ່ງ ເພີ່ມ ຄວາມເຂົ້າໃຈຮ່ວມກ່ຽວກັບສິ່ງທີ່ກ່ຽວຂ້ອງທັງໝົດກັບ SDP. ຄ່າໃຊ້ຈ່າຍລວມເຖິງ, ແຕ່ບໍ່ຈໍາກັດໃນ ການພັດທະນາ ແລະ /ຫລື ການຈັດຫາການເຝິກອົບຮົມ, ການແປພາສາ/ລ່າມ, ຄ່າໃຊ້ຈ່າຍກ່ຽວກັບ ການຈັດຫາການເຝິກອົບຮົມ ແລະ ຯລຯ.<br>• **ສະໜັບສະໜູນ/ ເຝິກສອນສໍາລັບການປ່ຽນຜ່ານໄປຍັງ SDP;** – ສະໜັບສະໜູນ ຜູ້ເຂົ້າຮ່ວມໃນການປ່ຽນແຜ່ນໄປຍັງ SDP. ນີ້ສາມາດລວມທັງການສະໜັບສະໜູນໃນຂອບເຂດເຊັ່ນ ການຕັດສິນໃຈ ວ່າ ແບບ ການບໍລິການ ການຈັດການດ້ານການເງິນອັນໃດແມ່ນເໝາະສົມສຸດສໍາລັບ ຜູ້ເຂົ້າຮ່ວມ, ການແນະນໍາສໍາລັບການຮັບເຂົ້າໃໝ່/ການວ່າຈ້າງພະນັກງານ, ວິທີການສ້າງແຜນການຈ້າງພະນັກງານສໍາຮອງ, ຯລຯ.<br>• **ການພັດທະນາແຜນການໃຊ້ຈ່າຍເບື້ອງຕົ້ນ** – ສະໜັບສະໜູນໃນການພັດທະນາ ການໃຊ້ ງົບປະມານ ສ່ວນບຸກຄົນຂອງ ຜູ້ເຂົ້າຮ່ວມຜ່ານ ແຜນການໃຊ້ຈ່າຍຂອງພວກເຂົາ, ເຊິ່ງອາດລວມເຖິງ ການປຶກສາຫາລືກັບ ການບໍລິການ ການຈັດການດ້ານການເງິນ.<br>• ***ຄວາມຕ້ອງການທີ່ໄດ້ລະບຸເພີ່ມເຕີມ*** – ລາຍການ/ກິດຈະກໍາທີ່ຈະສະໜັບສະໜູນຄວາມຕ້ອງການຂອງ ຜູ້ເຂົ້າຮ່ວມ ແລະ ການຈັດຕັ້ງປະຕິບັດ ໂປຣແກຣມ. |

## ການຄັດຕິດ 1

| | |
|---|---|
| **ກໍານົດ ທຶນຄວນຈະ ຖືກໃຊ້ແນວໃດ** | LVAC ແລະ ສູນພາກພື້ນຄວນປະເມີນ ຄວາມຕ້ອງການທ້ອງຖິ່ນຮ່ວມກັນໃນການຈັດຕັ້ງປະຕິບັດ SDP ເພື່ອກໍານົດ ການໃຊ້ທຶນທີ່ມີໃຫ້ມີປະສິດທິພາບທີ່ສຸດ. ອີງຕາມ ການປະເມີນຜົນຮ່ວມ, ລາຍການຄວນພັດທະນາກ່ຽວກັບ ຂົງເຂດບຸລິມະສິດ (ຂ້າງເທິງ) ທີ່ຈະຖືກໃຫ້ທຶນ, ລວມທັງ ຈໍານວນຄາດຄະເນທີ່ຈະຖືກໃຊ້ສໍາລັບ ແຕ່ລະຂົງເຂດທີ່ໄດ້ເລືອກ. ການຄາດຄະເນເປັນຂັ້ງ, ທີ່ລະອຽດ ສໍາລັບ ແຕ່ລະ ຂົງເຂດທີ່ລະບຸແມ່ນບໍ່ຈໍາເປັນໃນຈຸດນີ້. ແນວໃດກໍຕາມ, ການຫາລືກ່ຽວກັບບາງ ຄ່າໃຊ້ຈ່າຍທີ່ລະອຽດເຫຼົ່ານີ້ ອາດຊ່ວຍແຈ້ງໃຫ້ຊາບ ການຄາດຄະເນ.<br><br>ເມື່ອໄດ້ເຮັດຂໍ້ຕົກລົງໃນການນໍາໃຊ້ທຶນແລ້ວ, LVAC ແລະ ສູນພາກພື້ນຕ້ອງຮ່ວມກັນລາຍງານສິ່ງຕໍ່ໄປນີ້ໃຫ້ sdp@dds.ca.gov:<br><br>• ລົງລາຍການກ່ຽວກັບ ຂົງເຂດບຸລິມະສິດເພື່ອໃຫ້ໄດ້ຮັບທຶນ;<br>• ຈໍານວນທີ່ຄາດຄະເນຂອງການໃຫ້ທຶນທີ່ໄດ້ຈັດສັນໄປໃຫ້ ແຕ່ລະຂົງເຂດບຸລິມະສິດ; ແລະ,<br>• ການອະທິບາຍໂດຍຫຍໍ້ກ່ຽວກັບ ການຕັດສິນໃຈຖືກເຮັດແນວໃດ.<br><br>ສາມາດເຮັດການປ່ຽນແປງແບບຕໍ່ເນື່ອງ ຕາມຄວາມຕ້ອງການຂອງ ການປ່ຽນແປງຜູ້ເຂົ້າຮ່ວມ. ແນວໃດກໍຕາມ, ການນໍາໃຊ້ທຶນຕ້ອງສືບຕໍ່ເພື່ອໃຫ້ຍັງຄົງສອດຄ່ອງກັບ ບົດບັນຍັດ ແລະ ຄໍາແນະນໍານີ້ ແລະ ການຕັດສິນໃຈບົນການປ່ຽນແປງໃດໜຶ່ງຕ້ອງເຮັດຮ່ວມກັນໂດຍ LVAC ແລະ ສູນພາກພື້ນ. |
| **ການໄຫລ ວຽນຂອງ ເງິນທຶນ** | ຈໍານວນການໃຫ້ທຶນທີ່ລະບຸໃນໜ້າຕໍ່ໄປນີ້ ໄດ້ຖືກຈັດສັນໄປຍັງ ແຕ່ລະ ສູນພາກພື້ນແລ້ວ. ຂໍ້ສັງເກດຜ່ານມາ, ການຕັດສິນໃຈບົນການໃຊ້ທຶນເຫລົ່ານີ້ຕ້ອງກະທໍາຮ່ວມກັນໂດຍ LVAC ແລະ ສູນພາກພື້ນ.<br>ຕໍ່ຈາກນັ້ນ, ສູນພາກພື້ນຈະຊົດໃຊ້ຄືນ ບຸກຄົນ/ອົງກອນ ສໍາລັບການສະໜອງ ການບໍລິການ. ທຶນທີ່ຖືກກົດຂວາງບໍ່ເກີນວັນທີ 30 ມິຖຸນາ 2020, ຕ້ອງຂະຫຍາຍອອກບໍ່ເກີນເດືອນມິນາ 2022. |

**ການຄັດຕິດ 1**

ການແຈກຈ່າຍການໃຫ້ທຶນແມ່ນໄດ້ສັດສ່ວນຕໍ່ກັບຈໍານວນຂອງ ພື້ນທີ່ SDP ທີ່ມີຢູ່ທີ່ ແຕ່ລະ ສູນພາກພື້ນ.

| ການໃຫ້ທຶນສະໜັບສະໜູນຜູ້ເຂົ້າຮ່ວມ SDP –ງົບປະມານການເງິນປີ 2019/2020 * | | |
|---|---|---|
| ສູນພາກພື້ນ | ພື້ນທີ່ SDP ຢູ່ ແຕ່ລະ ສູນພາກພື້ນ | ການໃຫ້ທຶນທີ່ມີຢູ່ |
| ACRC | 179 | $106.870 |
| CVRC | 140 | $83.585 |
| ELARC | 110 | $65.674 |
| FDLRC | 73 | $43.584 |
| FNRC | 60 | $35.822 |
| GGRC | 68 | $40.599 |
| HRC | 99 | $59.107 |
| IRC | 256 | $152.839 |
| KRC | 95 | $56.719 |
| NBRC | 66 | $39.404 |
| NLACRC | 183 | $109.258 |
| RCEB | 154 | $91.944 |
| RCOC | 151 | $90.153 |
| RCRC | 55 | $32.837 |
| SARC | 125 | $74.630 |
| SCLARC | 110 | $65.674 |
| SDRC | 207 | $123.587 |
| SG/PRC | 95 | $56.719 |
| TCRC | 110 | $65.674 |
| VMRC | 100 | $59.704 |
| WRC | 64 | $38.210 |
| ລວມທັງໝົດ | 2.500 | **$1.492.593** |

* ທຶນທີ່ຖືກກົດຂວາງລະຫ່າງວັນທີ 30/6/2020, ຕ້ອງຂະຫຍາຍອອກບໍ່ເກີນເດືອນມີນາ 2022.